

## ປະຫວັດຄວາມເປັນມາຂອງຊົນເຜົ່າອາຄາ

ປະຫວັດຄວາມເປັນມາຂອງຊົນເຜົ່າອາຄາ ແມ່ນເຄື່ອນຍ້າຍມາຈາກ ແຂວງໄລເຈົາ ຂອງ ສສ ຫວຽດນາມ ມາຢູ່ແຂວງຜົ້ງສາລີ ແລະ ເຄື່ອນຍ້າຍມາຢູ່ ແຂວງອຸດົມໄຊ ໄດ້ປະມານ 60-70 ປີແລ້ວ ພົນລະເມືອງຊົນເຜົ່າອາຄາຢູ່ ແຂວງອຸດົມໄຊ

**ຊື່ເອີ້ນ:** ຊົນເຜົ່າອາຄາ ມີຊື່ເອີ້ນຫຼາຍຢູ່ແຕ່ເຂົາເຈົ້າເອີ້ນຕົວເອງວ່າ: ອາຄາ ສ່ວນເຜົ່າອື່ນ ເອີ້ນເຂົາເຈົ້າວ່າ ລາວ ສູງກໍ່ ຫຼື ລາວ ຊື່ທີ່ເຂົາເຈົ້າມັກທີ່ສຸດແມ່ນ ອາຄາ ອີງຕາມການລົງສໍາຫຼວດເກັບກໍາຂໍ້ມູນຕົວຈິງ ຊົນເຜົ່າອາຄາ ຢູ່ໃນສອງເມືອງ (ເມືອງຫຼາ ແລະ ເມືອງນາຫມໍ້) ປະກອບມີຫຼາຍແຊງດ້ອຍກັນເຊັ່ນ: ປູລີອາຄາ, ຈີຈໍອາຄາ, ຈີເປຍອາຄາ, ມູເຕີນອາຄາ, ສຸມາອາຄາ ແລະ ປາຍາອາຄາ.

**ພາສາ:** ຊົນເຜົ່າອາຄາແມ່ນຊົນເຜົ່າຫນຶ່ງທີ່ມີພາສາປາກເວົ້າເປັນຂອງຕົນເອງ, ແຕ່ບໍ່ມີຕົວຫນັງສືຂຽນຊົນເຜົ່າອາຄາ ໄດ້ຈັດ ເຂົ້າໃນຫມວດພາສາ ຈີນ-ຕີເບດ.

**ຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທໍາ-ສັງຄົມຂອງຊົນເຜົ່າອາຄາ:** ຊົນເຜົ່າອາຄາມີຄວາມ ເຊື່ອຖືຜີຢ່າງໜັກໜ່ວງ ແລະ ຍາກທີ່ສຸດທີ່ຈະໃຫ້ຊົນເຜົ່າອາຄາປ່ຽນຈິດໃຈຄວາມເຊື່ອຖືເກົ່າໄປເຊື່ອຖືສາສະໜາ ອື່ນ, ຊົນເຜົ່າອາຄາມີຄວາມເຊື່ອຖືຜີພໍ່ ຜີແມ່, ຜີເຮືອນ, ຜີບ້ານ ແລະ ບັນພະບູລຸດຂອງຕົນ, ບັນພະບູລຸດເຫຼົ່າ ນັ້ນຈະຄ່ອຍໃຫ້ຄວາມດູແລເບິ່ງແຍງ, ປົກປັກຄຸ້ມຄອງສະມາຊິກພາຍໃນຄອບຄົວ, ທຸກໆເຮືອນຈະມີຮ້ານຜີ. ນອກ ຈາກນີ້, ຊົນເຜົ່າອາຄາຍັງເຊື່ອຖືຜີຕົ້ນໄມ້ ຜີພູຜາປ່າດົງ, ຜີແມ່ນຫ້ວຍຮ່ອງ ແລະ ອື່ນໆ. ເນື່ອງຈາກຊົນເຜົ່າອາຄາມີຄວາມເຊື່ອຖືດັ່ງກ່າວຈຶ່ງມີພິທີກໍາຕ່າງໆ ຫຼາຍຢ່າງລັກສະນະຂອງການວິງວອນ, ຮ້ອງຂໍສິ່ງສັກສິດເພື່ອມາຄຸ້ມຄອງ, ຮັກສາ ແລະ ປັດເປົ່າສິ່ງຊົ່ວຮ້າຍຕ່າງໆ ໃຫ້ດົນບັນດານແຕ່ຄວາມດີມີສຸກໃນຊີວິດຄອບຄົວ, ຊົນເຜົ່າອາຄາ ມີຄວາມ ເຄັ່ງຄັດໃນເລື່ອງການປະຕິບັດຮີດຄອງປະເພນີ, ຂໍ້ຫ້າມ ແລະ ການຄະລໍາຢ່າງຫຼວງຫຼາຍເຊັ່ນ: ຫ້າມຈັບບາຍສິ່ງ ຂອງຢູ່ບໍລິເວນປະຕູໂຂງຂອງບ້ານ, ຫ້າມເອົາເຄື່ອງຂອງຫ້ອຍເທິງຝາປະຕູບ່ອນສີຫນ້າເຮືອນ, ຫ້າມເອົາຊີ້ນດິບເຂົ້າ ແລະ ຜ່ານບ້ານ, ຄະລໍາບໍ່ໃຫ້ກິນລູກສັດນ້ອຍໃນທ້ອງເຊັ່ນ: ລູກຟານ, ລູກໝູ, ລູກເງິນ ແລະ ລູກອື່ນໆ ຫ້າມ ຂັບລໍາ, ຮ້ອງຟ້ອນ ແລະ ລົມສາວຢູ່ໃນເຮືອນ, ບ່າວສາວລົມກັນແມ່ນລົມຢູ່ເລົ້າເຂົ້າ, ແມ່ຍິງມີລູກຫາງ (ລູກບໍ່ມີພໍ່) ບໍ່ໃຫ້ເກີດຢູ່ບ້ານ, ໄປເກີດຢູ່ປ່າ, ແມ່ຍິງເກີດລູກຝາແຝດບໍ່ໃຫ້ຢູ່ບ້ານ, ເກີດລູກມາອະໄວຍະວະບໍ່ຄົບ ຫຼື ອະໄວຍະ ວະເຫຼືອແບບຜິດປົກກະຕິ ແມ່ນຂ້າຖິ້ມ, ແມ່ຮ້າງນາງຫມ້າຍບໍ່ໃຫ້ຕາຍຢູ່ບ້ານ, ກໍລະນີຕາຍຢູ່ບ້ານຕ້ອງໄດ້ຍ້າຍບ້ານໄປຢູ່ບ່ອນໃຫມ່.

**ຊົນເຜົ່າອາຄາ** ສືບທອດເຊື້ອສາຍວົງຕະກູນທາງພໍ່ເປັນຫຼັກ, ຜູ້ຊາຍເມື່ອໄດ້ແຕ່ງດອງສ້າງຄອບຄົວແລ້ວຕ້ອງໄດ້ພາ ເມຍ ລົງປຸກສ້າງເຮືອນຕ່າງຫາກ ຢູ່ຕິດກັບເຮືອນ ໃຫຍ່ຂອງພໍ່ແມ່ຂອງຕົນ, ເພາະວ່າເຮືອນໃຫຍ່ຫຼັງຫນຶ່ງສາມາດນອນໄດ້ຫນຶ່ງຄອບຄົວ. ເພາະວ່າຊົນເຜົ່າອາຄາຜູ້ຊາຍມີບົດບາດສໍາຄັນທີ່ສຸດຢູ່ໃນເຮືອນ ແລະ ບ້ານອີກດ້ວຍ.

**ຊົນເຜົ່າອາຄາ** ຈະປຸກສ້າງເຮືອນຕາມສັນພູ, ເປັນພູບ່ອນທີ່ມີແສງແດດ ແລະ ສາຍລົມລ່ວງປອດໂປ່ງດີ, ແຕ່ສິ່ງສໍາຄັນຕ້ອງມີແຫຼ່ງນໍ້າຊົມໃຊ້ສະດວກສະບາຍໃນການດໍາລົງຊີວິດປະຈໍາວັນ ແລະ ມີບ່ອນເນື້ອທີ່ທໍາການຜະ ລິດຢູ່ອ້ອມຂ້າງບ້ານສະດວກຕື່ມ. ກ່ອນຈະຕັ້ງບ້ານຊົນເຜົ່າອາຄາຈະມີພິທີກສ່ຽງທວາຍຄັກແນ່ ເພື່ອເລືອກ ບ່ອນໃຫ້ຄັກໆ ເພື່ອໃຫ້ແນ່ໃຈວ່າເຈົ້າຖິ່ນເຈົ້າຖານຈະອະນຸຍາດໃຫ້ມາປຸກສ້າງເຮືອນຊານບ້ານຊ່ອງໄດ້ ຫຼື ບໍ່? ລັກສະນະເຮືອນຊານຂອງ ຊົນເຜົ່າອາຄາແມ່ນເຮືອນ ຮ້ານເຄິ່ງຫນຶ່ງ ແລະ ດິນເຄິ່ງຫນຶ່ງກ້ອງຕະລ່າງແມ່ນບ່ອນນອນ ຂອງສັດລ້ຽງ, ຫມູ, ຫມາ, ເປັດ, ໄກ່ ແລະ ອື່ນໆ. ທັງແມ່ນບ່ອນທີ່ ມ້ຽນພື້ນ, ເຄື່ອງມືທໍາການຜະລິດຂອງຄອບ ຄົວພ້ອມ.

ພາຍໃນເຮືອນຂອງຊົນເຜົ່າອາຄາໄດ້ແບ່ງເປັນສອງຫ້ອງຢ່າງຈະແຈ້ງຄື: ຫ້ອງນອນຂອງຜູ້ຊາຍ ແລະ ຫ້ອງນອນ ຂອງແມ່ຍິງດ້ວຍການຂັ້ນດ້ວຍຝາຫ້ອງນອນເຄິ່ງກາງເຮືອນ, ເຮືອນຫຼັງຫນຶ່ງຈະມີສອງປະຕູເທົ່ານັ້ນ, ປະຕູຫນຶ່ງ ຫ້ອງນອນຂອງຜູ້ຊາຍ ແລະ ປະຕູຫນຶ່ງແມ່ນເບື້ອງຫ້ອງນອນຂອງແມ່ຍິງ, ບ່ອນຮັບແຂກຄົນທີ່ມາທາງນອກແມ່ນຫ້ອງນອນຂອງຜູ້ຊາຍເທົ່ານັ້ນ, ຫ້ອງນອນຂອງແມ່ຍິງຄະລໍາບໍ່ໄດ້ຮັບແຂກ. ເຮືອນຫຼັງຫນຶ່ງ ຈະມີສອງເຕົາໄຟຄື: ເຕົາໄຟຫນຶ່ງ ແມ່ນຫ້ອງນອນຂອງຜູ້ຊາຍຈະແມ່ນບ່ອນ ແຕ່ງຢູ່ຄົວກິນ ແລະ ເຕົາໄຟຫນຶ່ງ ແມ່ນ ຫ້ອງນອນຂອງແມ່ຍິງ

**ປະເພນີຂອງ ຊົນເຜົ່າອາຄາ** ໃນກໍລະນີຜູ້ເຖົ້າ ແລະ ລູກເຂີຍໄປຊອກຄູ່ນອນຂອງຕົນໃນກາງຄືນຄໍ່າມືດແລ້ວຕໍາກັນ ຕ້ອງໄດ້ປົວແປງຜີເຮືອນຫມູຫນຶ່ງໂຕ 5-6 ກໍາ. ປະເພນີການເກີດລູກຂອງຊົນເຜົ່າອາຄາແມ່ນເກີດຢູ່ເຮືອນມີແມ່ຜີວ ແລະ ຜູ້ຍິງທີ່ມີປະສົບການໃຫ້ການຊ່ວຍເຫຼືອເບິ່ງແຍງຕະຫຼອດເວລາ. ກໍລະນີແມ່ເກີດລູກຝາແຝດ ແຕ່ກ່ອນແມ່ນ ຂ້າຖິ້ມດ້ວຍການເອົາຂີ້ເຖົ່າຖ່ານໄຟຖົມໃສ່ໃຫ້ຕາຍ, ຄູ່ຜົວເມຍໄລ່ໜີໄປຢູ່ປ່າ ແລະ ອື່ນໆ

**ປະເພນີການຕາຍຂອງຊົນ**ເຜົ່າອາຄາມີພິທີກໍາຫຼາຍຂັ້ນຕອນທີ່ສັບສົນທີ່ສຸດ, ເພື່ອໃຫ້ວິນຍານຂອງຜູ້ຕາຍບໍ່ເກີດເປັນພິດເປັນໄພຕໍ່ຜູ້ທີ່ຍັງມີຊີວິດຢູ່, ເພື່ອໃຫ້ຜູ້ຕາຍດີໃຈແລະຊ່ວຍປົກປ້ອງຄຸ້ມຄອງຮັກສາລູກຫຼານຜູ້ທີ່ມີຊີວິດໃນອະນາຄົດຕໍ່ໄປ ພິທີສົ່ງສະການດ້ວຍການຂຸດຂຸມຝັງສົບ, ບຸນປະເພນີຂອງຊົນເຜົ່າອາຄາ ໃນຮອບປີ ຫນຶ່ງມີບຸນປີໃຫມ່ (ບຸນກິນຈຽງ) ບຸນຊິ້ງຊ່າ, ບຸນລ້ຽງຜີເຮືອນ, ບຸນສ້ອມແປງປະຕູໂຂງ, ບຸນບ້ານ ແລະ ບຸນພິທີກໍາ ອື່ນໆ.

**ດ້ານສິລະປະວັນນະຄະດີຂອງຊົນເຜົ່າອາຄາ:** ມີຊັບລາ, ຮ້ອງເພງ, ບົດຟ້ອນ, ມີສຸພາສິດ, ມີຕໍານານພື້ນ ເມືອງກ່ຽວກັບບັນ ພະບູຣຸດຂອງຊົນເຜົ່າ ຕົນມີເຄື່ອງນຸ່ງຫົ່ມ ແລະ ການເອ້ຍ້ອງທີ່ເປັນເອກະລັກຕົນທັງຜູ້ຊາຍ ແລະ ຜູ້ຍິງ, ການນຸ່ງຫົ່ມ, ການແຕ່ງ ກາຍຈະມີຄວາມແຕກຕ່າງກັນຕາມແຕ່ລະໄວອາຍຸ ແລະ ລະຫວ່າງຜູ້ທີ່ໄດ້ສ້າງຄອບຄົວ ແລະ ຜູ້ທີ່ຍັງເປັນ ບ່າວສາວຈະແຕກຕ່າງກັນບ່ອນເຄື່ອງປະດັບເອ້ຍ້ອງຈະເຫັນຢ່າງຈະແຈ້ງທີ່ສຸດ ໃນຊົນເຜົ່າອາຄາ, ເຂົາເຈົ້າຈະໃຊ້ເງິນໝັນເທົ່າກັນ, ເງິນບີປະດັບປະດາເຕັມຕົນຕົວຄື: ຢູ່ຫມວກ, ເສື້ອ, ສາຍແອວ, ຖົງຝ້າຍ ແລະ ອື່ນໆ.

**ດ້ານເສດຖະກິດ:** ຊົນເຜົ່າອາຄາ ມີອາຊີບຕົ້ນຕໍແມ່ນເຮັດໄຮ່ປູກເຂົ້າຈ້າວ, ປູກພືດຜັກ, ຫາດແປ້ງ ເພື່ອສະຫນອງ ຄວາມຕ້ອງການໃນການດໍາລົງຊີວິດປະຈໍາວັນຂອງຄອບຄົວ. ນອກຈາກນີ້ເຂົາເຈົ້າຍັງນິຍົມກັນລ້ຽງສັດ: ງົວ, ຄວາຍ, ຫມູ, ຫມາ, ເປັດ, ໄກ່ ແລະ ມ້າເພື່ອໃຊ້ງານພ້ອມກັນນີ້ຊົນເຜົ່າອາຄາຍັງຊໍານິຊໍານານໃນການລ່າເນື້ອຍິງສັດປ່າ ເພື່ອເປັນອາຫານປະຈໍາວັນ.

**ຊົນເຜົ່າອາຄາ:** ຜ່ານການເກັບກໍາຂໍ້ມູນປະຫວັດຄວາມເປັນມາຮີດຄອງປະເພນີຂອງຊົນເຜົ່າອາຄາ ສາມາດ ສັງເກດ ແລະ ຕີລາຄາໄດ້ບາງດ້ານຄື:ດ້ານຄວາມເຊື່ອຖືຂອງຊົນເຜົ່ານີ້ມີຄວາມເຊື່ອຖືຜີຢ່າງຫນັກຫນ່ວງເຊັ່ນ: ມີຄວາມເຊື່ອຖືຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານແລະຜີບັນພະບູລຸດຂອງຕົນ. ນອກຈາກນີ້ຊົນເຜົ່າອາຄາມີຄວາມເຄັ່ງຄັດໃນເລື່ອງການຫ້າມ ແລະ ຂໍ້ຄະລໍາ, ຫ້າມເອົາຊີ້ນດິບເຂົ້າ ແລະ ຜ່ານບ້ານ, ແມ່ຍິງມີລູກຫາງ (ລູກບໍ່ມີພໍ່) ບໍ່ໃຫ້ເກີດຢູ່ບ້ານ, ໄປເກີດຢູ່ປ່າ, ແມ່ຍິງເກີດລູກຝາແຝດບໍ່ໃຫ້ຢູ່ບ້ານ, ເກີດມາອະໄວຍະວະເພດບໍ່ຄົບ ຫຼື ອະໄວຍະວະເຫຼືອແບບຜິດປົກກະຕິແມ່ນຂ້າຖິ້ມ, ແມ່ຫ້າງນາງຫມ້າຍບໍ່ໃຫ້ຕາຍຢູ່ບ້ານກໍລະນີ ຕາຍຢູ່ບ້ານຕ້ອງ ໄດ້ຍ້າຍບ້ານໄປຢູ່ບ່ອນໃຫມ່ ໃນນາມວິຊາການຈຶ່ງຕ້ອງການສະເຫນີໃຫ້ມີການຫຼຸດຜ່ອນ, ປ່ຽນແປງ, ຈຸດທີ່ຍັງ ໜັກໜ່ວງໂພດຕ້ອງໄດ້ຮັບການປັບປຸງ ແລະ ປ່ຽນແປງໃຫມ່ບາງດ້ານທີ່ບໍ່ຈໍາເປັນ.

## History of AKha Ethnic Group

Long time ago, a group of Akha people moved from Lai Chao province, Vietnam to Phongsaly province and some of them continued moving to Oudomxay province approximately 60 – 70 years ago. AKha has still a very authentic way of life. In fact, they prefer to build their houses on high elevation in the mountain, a place where there's cool climate, silence and peace. They are very friendly to other families and visitors.

Actually, there are many names to call, but they prefer to call themselves "Akha". It's the name that the like the most and they prefer every body to call them that. Akha people live in two different districts "La district and Namor district". In fact, Akha ethnic group consists of many different clans such as Akha Puli, Akha Jijo, Akha Jipia, Akha Souma, Akha Mouteun and Akha Paya. Akha people have their own speakin language, but no linguistic writing alphabets.

All Akha people strongly believe in animism and no other religions can replace it. They do repect their ancestors, natural powers as well as something invisible such as spirit of the father, spirit of the mother, spirit of the house, spirit of the village, spirit of the jungle and spirit of the river. Moreover, it's believed that these spirits mentioned are the real protectors. Each house has its own altar for worship. There are still many prohibitive things that people are not allowed to do, as for example do not touch any thing on the village gate, do not hang anything on the front door of the house, so not take raw meat into the village, and do not eat the new born animal which is still in its mom's womb. Moreover, singing, dancing and courtship are forbidden in the house, but outside. A pregnant single mom has to give birth in the forest according to traditional belief. In addition, they believe that if twins are born, or if a handicapped baby is born, that it means bad luck to the family, and children with a handicap are not supposed to be treated. Furthermore, when death of a widow/widower seems about to happen his or her body has to be moved out to somewhere ealse or out side the village.

As a rule, the son is the key person after the father, the one who continues the race. In case of there are many sons in one family or houshold, some of them will have move out to build their own new house after marriage. Akha men play the most important role within the family and village as well.

Most of the Akha people prefer to live in high elevation and along the hill where there's sunny and nice amostphere regulary. Moreover, a location where there's a source of water is required because water is so important for daily consumption as well as farming. The location is chosen with great care by an elder, as it's important that the location be good enough to their ancestors in order to have a happy family life afterwards. Houses are uasually built up on posts, although sometimes the side on the upper slope of the mountain is built directly on the ground, while the down – hill is elevated. The space under the house affords a convenient shelter for the animals such as pigs, dogs, ducks and chickes as wll as storage space storage for firewood and equipment.

The house is devided into two main sections, the men's and the women's, with a shoulder - high partition between the sections extanding as fas as the central house beam. One area is for sleeping, the other for work and various activities. The ancestral altar is hung on the woman's side of the partition. Each house has two open fireplaces for cooking. The one in the men's side is used primarily for cooking meat and brewing tea, while the rice and vaegetables are cooked on the women's hearth.